**ປະຊາທິປະໄຕ ປະຊາຊົນລາວ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງສຶກສາທິການ ແລະ ກິລາ

ກົມສ້າງຄູ

ວິທະຍາໄລຄູສາລະວັນ

ເລກທີ 2327/ວຄວ

ສາລະວັນ, ລົງວັນທີ 02 JUL 2024

**ບົດສະຫຼຸບ**

**ການຈັດຕັ້ງປະຕິບັດຫຼັກສູດການຮຽນ-ການສອນ ແລະ ການສອບເສັງ**

**ພາກຮຽນທີ 2 ປະຈຳສົກຮຽນ 2023-2024**

- **ອີງຕາມ**: ແຜນການເຄື່ອນໄຫວວຽກງານດ້ານວິຊາການ ປະຈຳສົກຮຽນ 2023-2024 ສະບັບເລກທີ 885 ລົງວັນທີ 5 ພະຈິກ 2023
- **ອີງຕາມ**: ບົດສະຫຼຸບການປະຕິບັດຫຼັກສູດ ແລະ ການສອບເສັງຂອງແຕ່ລະພາກວິຊາໃນພາກຮຽນ 2 ປະຈຳປີ 2024

## I. ສະພາບລວມ

ພະແນກວິຊາການເປັນພະແນກໜຶ່ງທີ່ນອນໃນວິທະຍາໄລຄູສາລະວັນ ເຊິ່ງມີພາລະບົດບາດໃນການບໍລິຫານຄຸ້ມຄອງວຽກວິຊາການ, ການພັດທະນາຫຼັກສູດ, ສື່ການຮຽນ-ການສອນ ແລະ ການຄົ້ນຄວ້າວິໄຈ. ການພັດທະນາປັບປຸງຖານຂໍ້ມູນ ແລະ ສະຖິຕິນັກສຶກສາ, ສົ່ງເສີມກິດຈະກຳການຮຽນ-ການສອນໃຫ້ແຕ່ລະພາກວິຊາ ແລະ ໂຮງຮຽນສາທິດ. ໃນສົກຮຽນ 2023-2024 ວິທະຍາໄລຄູສາລະວັນ ມີ 6 ພາກວິຊາຄູຄື: ພາກວິຊາສ້າງຄູສຶກສາກ່ອນໄວຮຽນ, ພາກວິຊາສ້າງຄູປະຖົມ, ພາກວິຊາພາສາລາວ, ພາກວິຊາປະຫວັດສາດ-ພູມສາດ, ພາກວິຊາພາສາອັງກິດ ແລະ ໄອຊີທີ ແລະ ພາກວິຊາຊີວະວິທະຍາ-ເຄມີ.

ມີສາຍຮຽນໃນພາກປົກກະຕິຄື: ສາຍສ້າງຄູສຶກສາກ່ອນໄວຮຽນ ລະບົບ 12+2, 12+4, ສາຍສ້າງຄູປະຖົມ ລະບົບ 12+2, 12+4, 11+3+2, ສາຍພາສາລາວ ລະບົບ, ສາຍປະຫວັດສາດ-ພູມສາດ, ສາຍພາສາອັງກິດ ແລະ ໄອຊີທີ ໃນລະບົບ 12+4 ແລະສາຍຊີວະວິທະຍາ-ເຄມີ ລະບົບ 12+4, 11+3+2, ມີຈຳນວນຫ້ອງຮຽນທັງໝົດມີ 16 ຫ້ອງຮຽນ ( ບໍ່ລວມນັກສຶກສາຕໍ່ເນື່ອງພັກສິ້ນປີຮຽນ ). ມີຈຳນວນນັກສຶກສາຕົ້ນພາກຮຽນ2 ທັງໝົດ 200 ຄົນ, ຍິງ 129 ຄົນ. ນັກສຶກສາປີສຸດທ້າຍລົງຝຶກຫັດວິຊາຊີບຢູ່ເມືອງທ່າແຕງ ແລະ ເມືອງລະມາມ ແຂວງເຊກອງ ຈຳນວນ 75 ຄົນ, ຍິງ 47 ຄົນ. ມີນັກສຶກສາທ້າຍພາກຮຽນ2 ທັງໝົດ 196 ຄົນ, ຍິງ 127 ຄົນ. ຈຳນວນຄູ-ອາຈານທີ່ສອນໃນແຕ່ລະພາກວິຊາທັງໝົດ 79 ທ່ານ, ຍິງ 39 ທ່ານ.

## II. ຈຸດປະສົງ

- ເພື່ອສະຫຼຸບຜົນສຳເລັດຂອງການຈັດຕັ້ງປະຕິບັດຫຼັກສູດ ປະຈຳພາກຮຽນທີ2 ສົກຮຽນ 2023-2024
- ເພື່ອກວດກາຄືນກ່ຽວກັບສະຖິຕິນັກສຶກສາຕົ້ນພາກຮຽນ2 ແລະ ທ້າຍພາກຮຽນ2 ໃນແຕ່ລະສາຍຮຽນ.

## III. ເນື້ອໃນ

### 1. ສະພາບການປະຕິບັດຫຼັກສູດ

ເພື່ອປະຕິບັດຕາມໂຄງສ້າງຫຼັກສູດໃນແຕ່ລະສາຍຮຽນພະແນກວິຊາການກໍ່ຄືໜ່ວຍງານສົ່ງເສີມວິຊາການໄດ້ມີການສົມທົບກັບພາກວິຊາ ຈັດແບ່ງແຜນແບ່ງປັນຊົ່ວໂມງສອນປະຈຳພາກຮຽນ2 ຕາມໂຄງສ້າງຫຼັກສູດ, ແຈ້ງ

ແຜນແບ່ງປັນຊົ່ວໂມງສອນ, ອອກຕາຕະລາງຮຽນເຊິ່ງເລີ່ມແຕ່ວັນທີ 22/1/ 2024 ຕິດຕາມການຂຶ້ນຫ້ອງສອນຂອງພະນັກງານຄູ-ອາຈານເຊິ່ງແມ່ນໜ່ວຍງານສົ່ງເສີມສົມທົບກັບພາກວິຊາ ຈາກການຕິດຕາມສັງເກດເຫັນໄດ້ວ່າການປະຕິບັດຫຼັກສູດຂອງຄູ - ອາຈານແຕ່ລະພາກວິຊາສາມາດສັງລວມ ແລະ ຕີລາຄາຜົນສໍາເລັດຂອງການປະຕິບັດຫຼັກສູດໄດ້ 100/100 ໄດ້ຈັດການສອບເສັງໃນຄັ້ງວັນທີ 20-24 ພຶດສະພາ 2024 ເຊິ່ງສາມາດຕີລາຄາຜົນການສອບເສັງໄດ້ລຸ່ມນີ້:

**2. ຜົນໄດ້ຮັບ.**

**ກ. ຜົນຂອງການສອບເສັງນັກສຶກສາປີທີ 1,2,3**

ຜົນຂອງການສອບເສັງສາມາດສະຫຼຸບໄດ້ດັ່ງນີ້:

- ສາຍອະນຸບານ ລະບົບ 12+4 ປີ 1 ທັງໝົດ 10 ຄົນ, ສອບເສັງຜ່ານ 10 ຄົນເທົ່າກັບ 100%
- ສາຍອະນຸບານ ລະບົບ 12+4 ປີ 2 ທັງໝົດ 11 ຄົນ, ສອບເສັງຜ່ານ 11 ຄົນເທົ່າກັບ 100%
- ສາຍອະນຸບານ ລະບົບ 12+4 ປີ 3 ທັງໝົດ 12 ຄົນ, ສອບເສັງຜ່ານ 12 ຄົນເທົ່າກັບ 100%
- ສາຍປະຖົມ ລະບົບ 12+4 ປີ 2 ທັງໝົດ 9 ຄົນ, ຍິງ 5 ຄົນ, ສອບເສັງຜ່ານ 9 ຄົນເທົ່າກັບ 100%
- ສາຍປະຖົມ ລະບົບ 12+4 ປີ 3 ທັງໝົດ 18 ຄົນ,ຍິງ 10 ຄົນ, ສອບເສັງຜ່ານ 18 ຄົນເທົ່າກັບ 100%
- ສາຍປະຖົມ ລະບົບ 11+3+2 ປີ 2 ທັງໝົດ 7 ຄົນ,ຍິງ 0 ຄົນ, ສອບເສັງຜ່ານ 7 ຄົນເທົ່າກັບ 100%
- ສາຍປະຫວັດສາດ ລະບົບ 12+4 ປີ 3 ທັງໝົດ 8 ຄົນ, ສອບເສັງຜ່ານ 8 ຄົນເທົ່າກັບ 100%
- ສາຍໄອຊີທີ ລະບົບ 12+4 ປີ 1 ທັງໝົດ 14 ຄົນ,ຍິງ 10 ຄົນ, ສອບເສັງຜ່ານ 14 ຄົນເທົ່າກັບ 100%
- ສາຍຊີວະສາດ ລະບົບ 12+4 ປີ 2 ທັງໝົດ 7 ຄົນ,ຍິງ 5 ຄົນ, ສອບເສັງຜ່ານ 7 ຄົນເທົ່າກັບ 100%
- ສາຍຊີວະສາດ ລະບົບ 12+4 ປີ 3 ທັງໝົດ 12 ຄົນ,ຍິງ 4 ຄົນ, ສອບເສັງຜ່ານ 12 ຄົນເທົ່າກັບ 100%
- ສາຍຊີວະສາດ ລະບົບ 11+3+2 ປີ 2 ທັງໝົດ 5 ຄົນ,ຍິງ 2 ຄົນ, ສອບເສັງຜ່ານ 5 ຄົນເທົ່າກັບ 100%
- ສາຍເຄມີສາດ ລະບົບ 12+4 ປີ 3 ທັງໝົດ 7 ຄົນ,ຍິງ 6 ຄົນ, ສອບເສັງຜ່ານ 7 ຄົນເທົ່າກັບ 100%

**3. ຈໍານວນຖິຕິນັກສຶກສາ ແລະ ສະພາບຂອງນັກສຶກສາແຕ່ລະພາກວິຊາໃນແຕ່ລະຫ້ອງມີດັ່ງນີ້:**

ຕົ້ນພາກຮຽນ2 ສົກຮຽນ 2023-2024 ວິທະຍາໄລຄູສາລະວັນ ມີຈໍານວນນັກສຶກສາຕົ້ນພາກຮຽນທັງໝົດ 200 ຄົນ, ຍິງ 129 ຄົນ ແລະ ທ້າຍພາກຮຽນ 196 ຄົນ, ຍິງ 127 ຄົນ ລາຍລະອຽດແຕ່ລະພາກວິຊາດັ່ງນີ້:

| ລ/ດ | ສາຍຮຽນ | ລະບົບ | ປີ | ຕົ້ນ ພາກຮຽນ2 | | ທ້າຍ ພາກຮຽນ2 | | ນັກສຶກສາທີ່ມີຈຸດພິເສດ(ຂາດຮຽນຫຼາຍ) | ໝາຍເຫດ |
|---|---|---|---|---|---|---|---|---|---|
| | | | | ລວມ | ຍິງ | ລວມ | ຍິງ | | |
| **ພາກວິຊາສ້າງຄູສຶກສາກ່ອນໄວຮຽນ** | | | | | | | | | |
| 1 | ຄູການສຶກສາກ່ອນໄວຮຽນ | 12+4 | 1 | 10 | 10 | 10 | 10 | | |
| 2 | ຄູການສຶກສາກ່ອນໄວຮຽນ | 12+4 | 2 | 13 | 13 | 12 | 12 | ນ ແຕງອ່ອນ ຈັນທະລັງສີ | ປະລະ |
| 3 | ຄູການສຶກສາກ່ອນໄວຮຽນ | 12+4 | 3 | 13 | 13 | 12 | 12 | ນ ສຸກສະຫວັນ ວົງດາລາດ | ປະລະ |
| 4 | ຄູການສຶກສາກ່ອນໄວຮຽນ | 12+4 | 4 | 21 | 21 | 21 | 21 | | |
| **ລວມ** | | | | **57** | **57** | **55** | **55** | | |
| **ພາກວິຊາສ້າງຄູປະຖົມ** | | | | | | | | | |
| 1 | ປະຖົມ | 12+2 | 2 | 22 | 9 | 22 | 9 | | |

| | | | | | | | | | |
|---|---|---|---|---|---|---|---|---|---|
| 2 | ຄູປະຖົມ | 12+4 | 2 | 9 | 5 | 9 | 5 | | |
| 3 | ປະຖົມ | 12+4 | 3 | 18 | 10 | 18 | 10 | | |
| 4 | ປະຖົມ | 12+4 | 4 | 19 | 10 | 19 | 10 | | |
| 5 | ປະຖົມຕໍ່ເນື່ອງ | 11+3+2 | 2 | 7 | 0 | 7 | 0 | | |
| **ລວມ** | | | | **75** | **34** | **75** | **34** | | |
| **ພາກວິຊາສ້າງຄູພາສາລາວ-ວັນນະຄະດີ** | | | | | | | | | |
| 1 | ພາສາລາວ | 12+4 | 4 | 13 | 6 | 13 | 6 | | |
| **ລວມ** | | | | **13** | **6** | **13** | **6** | | |
| **ພາກວິຊາສ້າງຄູປະຫວັດສາດ-ພູມສາດ** | | | | | | | | | |
| 1 | ປະຫວັດສາດ | 12+4 | 3 | 8 | 5 | 8 | 5 | | |
| **ລວມ** | | | | **8** | **5** | **8** | **5** | | |
| **ພາກວິຊາສ້າງຄູພາສາອັງກິດ-ໄອຊີທີ** | | | | | | | | | |
| 1 | ICT | 12+4 | 1 | 15 | 10 | 14 | 10 | ພຣະ ບຸນກອນ ສອນ ສະຫວັນ | ປະລະ |
| **ລວມ** | | | | **15** | **10** | **14** | **10** | | |
| **ພາກວິຊາສ້າງຄູຊີວະວິທະຍາ-ເຄມີ** | | | | | | | | | |
| 1 | ຊີວະສາດຕໍ່ເນື່ອງ | 11+3+2 | 2 | 5 | 2 | 5 | 2 | | |
| 2 | ຊີວະສາດ | 12+4 | 2 | 8 | 5 | 7 | 5 | ທ ກົມ້ອຍ ເຢີດທາ ພອນ | ປະລະ |
| 3 | ຊີວະສາດ | 12+4 | 3 | 12 | 4 | 12 | 4 | | |
| 4 | ເຄມີສາດ | 12+4 | 3 | 7 | 6 | 7 | 6 | | |
| **ລວມ** | | | | **32** | **17** | **31** | **17** | | |
| **ລວມທັງໝົດ** | | | | **200** | **129** | **196** | **127** | | |

**4. ນັກສຶກສາທີ່ປະລະການຮຽນ.**

**ກ. ນັກສຶກສາທີ່ປະລະການຮຽນມີ 4 ຄົນ, ຍິງ 2 ຄົນດັ່ງລາຍຊື່ລຸ່ມນີ້:**

1. ນາງ ແຕງອ່ອນ ຈັນທະລັງສີ 12+4 ອະນຸບານປີ 2 ປະລະການຮຽນ
2. ນາງ ສຸກສະຫວັນ ວົງດາລາດ 12+4 ອະນຸບານປີ 3 ປະລະການຮຽນ
3. ພຣະ ບຸນກອນ ສອນສະຫວັນ 12+4 ໄອຊີທີ ປີ 1 ປະລະການຮຽນ
4. ທ ກົມ້ອຍ ເຢີດທາພອນ 12+4 ຊີວະສາດ ປີ 2 ປະລະການຮຽນ

## IV. ຂໍ້ສະດວກ ແລະ ຂໍ້ຫຍຸ້ງຍາກ, ບົດຮຽນທີ່ຖອດຖອນໄດ້ ແລະ ພາກສະເໜີ

1. **ຂໍ້ສະດວກ**

- ມີອາຄານຮຽນທີ່ຖາວອນ ແລະ ຄະນະຮັບຜິດຊອບໄດ້ເອົາໃຈໃສ່ຕິດຕາມຢ່າງໃກ້ຊິດ, ໄດ້ລົງເລິກ ແລະ ໃຫ້ຄຳແນະນຳໃນການຂຶ້ນຫ້ອງຂອງຄູ-ອາຈານ
- ຄູ-ອາຈານມີຄວາມຕັດສິນໃຈສູງໃນການຄົ້ນຄວ້າເພື່ອສິ່ງຄວາມຮູ້ໃຫ້ແກ່ຜູ້ຮຽນ
- ຄູ-ອາຈານທີ່ສອນແມ່ນໄດ້ດຳເນີນການຮຽນ-ການສອນປົກກະຕິ ແລະ ປະຕິບັດຕາມໂຄງສ້າງຫຼັກສູດ.

**2. ຂໍ້ຫຍຸ້ງຍາກ**

- ການຕິດຕາມການຂຶ້ນຮ່ວມໂມງສອນຂອງຄູບາງລາຍວິຊາ ຍັງບໍ່ໄດ້ຮັບຜົນສຳເລັດເທົ່າທີ່ຄວນ ເຮັດໃຫ້ການເກັບກຳມີຄວາມຊັກຊ້າ.
- ໃນຕິດຕາມການຮຽນ-ການສອນມີຄວາມຫຍຸ້ງຍາກ ເພາະຄູບາງລາຍວິຊາຂຶ້ນສອນແລ້ວບໍ່ບັນທຶກການຈັດການຮຽນ-ການສອນເຮັດໃຫ້ການຕິດຕາມ ແລະ ລາຍງານສະພາບການຮຽນການສອນມີຄວາມຊັກຊ້າ.
- ບາງລາຍວິຊາຍັງບໍ່ທັນມີເອກະສານປະກອບການສອນຢ່າງລະອຽດ
- ນັກສຶກສາຈຳນວນໜຶ່ງຍັງຂາດການຄົ້ນຄວ້າຮໍ່າຮຽນ ແລະ ຊອກຫາຄວາມຮູ້ຈາກແຫຼ່ງຂໍ້ມູນຕ່າງເພື່ອມາພັດທະນາຕົນເອງ

**3. ບົດຮຽນທີ່ຖອດຖອນໄດ້**

- ປັບປຸງຫ້ອງຄອມພິວເຕີ ເພື່ອຕອບສະໜອງໃຫ້ແກ່ການຈັດການຮຽນ-ການສອນ
- ຄູສອນຕ້ອງສ້າງຄວາມພ້ອມໃຫ້ແກ່ຕົນເອງໃນການເປັນຄູຍຸກໃໝ່ສາມາດສອນໄດ້ໂດຍຜ່ານທາງອອນລາຍ ແລະ ອອບລາຍ.

**4. ພາກສະເໜີ**

- ສະເໜີໃຫ້ຄູ-ອາຈານ ບັນທຶກການຂຶ້ນຫ້ອງສອນ ແລະ ລາຍງານການເຄື່ອນໄຫວຂອງນັກສຶກສາໃຫ້
- ຄູ-ອາຈານສອນທີ່ໄປກອງປະຊຸມທີ່ບໍ່ໄດ້ມອບວຽກບ້ານໃຫ້ນັກຮຽນເວລາກັບມາຕ້ອງໄດ້ສອນຄືນ
- ສະເໜີໃຫ້ໜ່ວຍງານທີ່ຮັບຜິດຊອບສົ່ງບົດລາຍງານການປະຕິບັດຫຼັກສູດການຮຽນ-ການສອນຂອງພາກວິຊາ ໃຫ້ພະແນກວິຊາການໃຫ້ທັນຕາມກຳນົດເວລາ.
- ຄູສອນລາຍວິຊາຄວນສົ່ງຫົວບົດສອບເສັງໃຫ້ພາກວິຊາ 1 ສະບັບກ່ອນສອບ
- ຄວນເອກະພາບກັນໃນການຈັດກຳມະການຍາມຫ້ອງສອບໂດຍບໍ່ໃຫ້ຄູລາຍວິຊາຊອກຫາເອງ
- ສະເໜີໃຫ້ຄູ-ອາຈານທີ່ສອນໃນແຕ່ລະສາຍຮຽນສົ່ງຄະແນນໃຫ້ທັນຕາມເວລາທີ່ກຳນົດໄວ້
- ສະໜອງອຸປະກອນການສອບເສັງ ແລະ ຈັດຄູຍາມຫ້ອງສອບເຂົ້າຕື່ມ
- ສະເໜີໃຫ້ຄູ-ອາຈານເອົາລາຍຊື່ເຂົ້າຕາມຖານຂໍ້ມູນກ່ອນປ້ອນ ແລະ ສົ່ງຄະແນນໃຫ້ພາກວິຊາ.

ວັນທີ 02 JUL 2024

ຊ ຜູ້ອຳນວຍການວິທະຍາໄລຄູ

ອຸດຕະມະ ແສງອາລຸນ

ວັນທີ 02 JUL 2024

ພະແນກວິຊາການ

ປອ ສຸພັນ [illegible]